ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------------------------

ກະຊວງກະສິກຳ ແລະ ສິ່ງແວດລ້ອມ
ກົມພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ
ສັນຍາເລກທີ : C4-G-02

ເລກທີ: 1430 /ກພຫຼ
ນະຄອນຫຼວງວຽງຈັນ,ວັນທີ: 09 JUN 2026

## ໜັງສືເຊີນເຂົ້າຮ່ວມການປະມູນສົມທຽບລາຄາ

**ເຖິງ: ບໍລິສັດຜູ້ສະໜອງພາຫະນະ**

**ເລື່ອງ: ເຊີນເຂົ້າຮ່ວມປະມູນສົມທຽບລາຄາ ສຳລັບການໜອງ ລົດກະບະ ຈຳນວນ 1 ຄັນ ໃຫ້ໂຄງການຫຼຸດຜ່ອນຄວາມທຸກຍາກ ແລະ ການຂາດໂພຊະນາການໃນເຂດຊົນນະບົດ ໄລຍະ II, ອົງປະກອບທີ 4.**

- ອີງຕາມ ກົດໝາຍວ່າດ້ວຍ ການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017;
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກົມພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ ສະບັບເລກທີ 1249/ກສ, ລົງວັນທີ 12 ກັນຍາ 2025;
- ອີງຕາມ ສັນຍາ ເງິນກູ້ຢືມ ລະຫວ່າງລັດຖະບານລາວ ແລະ ທະນາຄານໂລກ ສະບັບເລກທີ 7431-LA, ລົງວັນທີ 25 ທັນວາ 2023;
- ອີງຕາມ ແຜນຈັດຊື້-ຈັດຈ້າງ ໂຄງການ ຫຼຸດຜ່ອນຄວາມທຸກຍາກ ແລະ ການຂາດໂພຊະນາການໃນເຂດຊົນນະບົດ ໄລຍະ II ປະຈຳປີ 2026.

1. ກະຊວງກະສິກຳ ແລະ ສິ່ງແວດລ້ອມ, ກົມພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ, ໄດ້ຮັບທຶນກູ້ຢືມຈາກທະນາຄານໂລກ (WB) ເພື່ອດຳເນີນການໂຄງການ ຫຼຸດຜ່ອນຄວາມທຸກຍາກ ແລະ ການຂາດໂພຊະນາການໃນເຂດຊົນນະບົດ ໄລຍະ II (ລພຊ II) ມີຈຸດປະສົງນຳໃຊ້ງົບປະມານສ່ວນໜຶ່ງເພື່ອດຳເນີນການປະມູນຈັດຊື້ ລົດກະບະ ຈຳນວນ 1 ຄັນ ໃຫ້ ອົງປະກອບທີ 4 (ກົມຮ່ວມມື ແລະ ການເງິນສາກົນ, ກະຊວງການເງິນ) ຂອງໂຄງການ ດ້ວຍການສະເໜີໃຫ້ຍື່ນການສົມທຽບລາຄາ.
2. ກະຊວງກະສິກຳ ແລະ ສິ່ງແວດລ້ອມ, ກົມພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ, ຂໍເຊີນບໍລິສັດຂອງທ່ານ ເຂົ້າຍື່ນຊອງປະມູນສົມທຽບລາຄາສຳລັບການສະໜອງລົດກະບະ ຈຳນວນ 1 ຄັນ. ໄລຍະການສົ່ງມອບ 90 ວັນ.
3. ການປະມູນນີ້ ຈະດຳເນີນຕາມຂັ້ນຕອນການປະມູນສົມທຽບລາຄາ ທີ່ໄດ້ກຳນົດໄວ້ ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
4. ຊອງປະມູນຕ້ອງສົ່ງໃຫ້ຄະນະຮັບຜິດຊອບກ່ອນເວລາ 14:00 ໂມງຂອງວັນທີ 24 ມິຖຸນາ 2026 ທີ່ ຫ້ອງປະຊຸມ ຫ້ອງປະຊຸມຂອງຫ້ອງການປະສານງານໂຄງການ ລພຊ II, ບ້ານ ສີສະຫວາດ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. (ຖັດຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ) ໂທລະສັບ 030 9226163 ແລະ ຊອງປະມູນສົມທຽບລາຄາທຸກໆຊອງຈະໄດ້ເປີດໃນເວລາ 14:00 ໂມງ ຂອງວັນທີ 24 ມິຖຸນາ 2026 ໂດຍຊ້ອງໜ້າຄະນະກຳມະການປະມູນຈັດຊື້–ຈັດຈ້າງໂຄງການ ແລະ ຕົວແທນຂອງຜູ້ປະມູນ ທີ່ສົນໃຈຕ້ອງການເຂົ້າຮ່ວມ.

ຫົວໜ້າກົມ

ປອ. ວົງສະຫວັນ ວົງໄກສອ